# ຈະມີຫຍັງເກີດຂຶ້ນເມື່ອຂ້ອຍແຈ້ງບັນຫາການສ້ອມແປງຢູ່ໃນເຮືອນຂ້ອຍ?

ຊຸມຊົນເກີດໃໝ່ ໃຫ້ບໍລິການການສ້ອມແປງທີ່ມີ ມາດຕະຖານສູງແກ່ບັນດາຜູ້ອາໄສທັງຫຼາຍ.

ໃນເມື່ອຜູ້ອາໄສຜູ້ນຶ່ງແຈ້ງບັນຫາໃດນຶ່ງ ບັນຫາ ນັ້ນກໍຈະຖືກແກ້ໄຂໃຫ້ກ່ອນຫຼືຫຼັງຂຶ້ນຢູ່ກັບລັກສນະຂອງການສ້ອມແປງທີ່ຕ້ອງການ. ໃນເມື່ອບັນຫານັ້ນໄດ້ຖືກຈັດເຂົ້າໃນປະເພດນັ້ນແລ້ວ, ການສ້ອມແປງກໍຈະມີຂຶ້ນພາຍໃນລະຍະເວລາທີ່ຈັດໃຫ້ແນ່ນອນ.

ຕາຕະລາງທີ່ຢູ່ຂ້າງລຸ່ມນີ້ຈະໃຫ້ຕົວຢ່າງຂອງບັນດາບັນຫາ ແລະ ລະຍະເວລາທີ່ຕ້ອງລໍຖ້າການສ້ອມແປງ.

| ປະເພດ | ບັນຫາ | ຕົວຢ່າງ | ລະຍະເວລາຕອບຮັບ |
|---|---|---|---|
| **ສຸກເສີນ** | ການສ້ອມແປງໃດໆທີ່ຈະເຮັດໃຫ້ເຮືອນບໍ່ປອດໄພ ຫຼື ບໍ່ສາມາດຢູ່ໄດ້ຖ້າຫາກວ່າບໍ່ສ້ອມແປງໃນທັນທີ. | ບໍ່ມີໄຟຟ້າ, ທໍ່ນ້ຳແຕກ, ສ້ວມຖ່າຍຕັນ ຫຼື ຮົ່ວຊຶມ, ປ່ອງຢ້ຽມແຕກ, ການສ້ອມແປງຫຼັງຈາກເຮືອນຖືກງັດແງະ ຯລຯ. | ການປະຕິບັດສຸກເສີນ<br>ໄປເບິ່ງບັນຫານັ້ນພາຍໃນນຶ່ງຊົ່ວໂມງແລະແກ້ໄຂ ຫຼື ເຮັດໃຫ້ມີຄວາມປອດໄພພາຍໃນສີ່ຊົ່ວໂມງຫຼັງຈາກທີ່ໄດ້ຮັບໂທຣະສັບແຈ້ງ. |
| **ບໍ່ປອດພັຍ** | ເຫດການທີ່ກໍ່ເກີດຜົນທີ່ເປັນອັນຕຣາຍແກ່ ສຸຂະພາບ ຫຼື ຄວາມປອດໄພຂອງຜູ້ອາໄສຄົນໃດຄົນນຶ່ງ | ໄຟຟ້າຂາດເປັນບາງສ່ວນ, ເຕົາໄຟບໍ່ທຳງານ, ນ້ຳຮ້ອນຮົ່ວ, ເກີດຄວາມເສັຍຫາຍແກ່ລະບົບນ້ຳ ຫຼື ກອັກນ້ຳຮົ່ວຢ່າງແຮງ, ລະບົບທໍ່ນ້ຳເສັຍຢູ່ ໃຕ້ດິນຊຶມ. | ການຕອບຮັບ ແລະ ການແກ້ໄຂ ພາຍໃນລະຍະ ເວລາສີ່ຊົ່ວໂມງຫຼັງຈາກໄດ້ຮັບການແຈ້ງ. |
| **ຄວາມເສັຍຫາຍ** | ກ່ຽວພັນກັບສິ່ງຂອງທີ່ບໍ່ທຳງານ ຫຼື ສິ່ງທີ່ໃຫ້ຄວາມສະດວກ. | ບໍລິການນ້ຳຮ້ອນບໍ່ທຳງານ, ສ້ວມຖ່າຍກົດນ້ຳບໍ່ລົງດີ, ການຕິດຕັ້ງໄຟຟ້າບໍ່ຖືກ, ກອນປະຕູລູອັກບໍ່ໄດ້ ຫຼື ສິ່ງໃດສິ່ງນຶ່ງຄ້າຍໆນັ້ນ. | ການຕອບສນອງ ແລະ ການແກ້ໄຂກ່ອນ 6ໂມງ ແລງຂອງມື້ເຮັດວຽກມື້ຕໍ່ມາຫຼັງຈາກໄດ້ຮັບການແຈ້ງ. |
| **ການສ້ອມແປງຕ່າງໆ** | ການສ້ອມແປງອັນໃດອັນນຶ່ງທີ່ບໍ່ເປັນອັນຕຣາຍແກ່ຄວາມປອດໄພ ຫຼື ສຸຂະພາບຂອງຜູ້ອາໄສຄົນໃດຄົນນຶ່ງ. | ການສ້ອມແປງຮົ່ວ, ຮາວຕາກເຄື່ອງນຸ່ງທີ່ ເສັຍຫາຍ, ການປ່ຽນກ໊ອກນ້ຳ ຯລຯ | ການຕອບຮັບພາຍໃນລະຍະເວລາຫ້າມື້ຣາຊການ ແລະ ການສ້ອມແປງພາຍໃນລະຍະເວລາ 20 ມື້ ຣາຊການ. |

PO BOX 151 Bonnyrigg LPO NSW 2177
ຫ້ອງການ **1300 137 265** ແຟັກຊ໌ **9616 9100**
**info@newleafcommunitiess.com.au**

Newleaf
Communities

# ເຈັ້ຍຂໍ້ມູນ
# ບັນດາການບໍຣິການ ແລະ ການສ້ອມແປງ

## ມີການສ້ອມແປງຂັ້ນມາຕຖານອັນໃດ ແດ່ຕໍ່ເຮືອນ ຂ້ອຍທີ່ຂ້ອຍຄວນໄດ້ຮັບ?

ບັນດາເຮືອນທັງຫຼາຍຈະຖືກສ້ອມແປງຕາມຂັ້ນທີ່ ກະຊວງເຄຫະສະຖານ ຣັດ ນຊວ ເອີ້ນວ່າ “ຂັ້ນ ມາຕຖານຂອງການປ່ຽນແປງ”. ອັນນີ້ແມ່ນ ໝາຍເຖິງ: ຄວາມສະອາດ, ປອດພັຍ ແລະ ເປັນ ໜ້າຢູ່ໄດ້.

ພາຍໃນລະຍະ 15ປີຂ້າງໜ້າ ບັນດາເຮືອນໃນ ເຂດບອນນີຣິກຈະຖືກມ້າງຖິ້ມ ແລະ ຈະປຸກ ເຮືອນໃໝ່ຂຶ້ນແທນ. ອັນນີ້ໝາຍຄວາມວ່າ ການ ປັບປຸງຕ່າງໆ ຈະຖືກເຮັດຢູ່ໃນຂັ້ນຕ່ຳເພື່ອໃຫ້ແນ່ ໃຈວ່າເງິນຂອງຊຸມຊົນໄດ້ ຖືກໃຊ້ຈ່າຍດ້ວຍຄວາມ ເໝາະສົມ.

ໃນທຸກໆກໍຣະນີ ພວກເຮົາຈະປະເມີນການສ້ອມ ແປງປ່ຽນໃໝ່ແຕ່ລະອັນ ແລະ ພວກເຮົາຈະເຮັດ ໃຫ້ດີທີ່ສຸດ ເພື່ອໃຫ້ຖືກກັບຄວາມຕ້ອງການຂອງ ຜູ້ອາໃສ.

ຕົວຢ່າງວ່າ ພວກເຮົາອາດຈະຕາບພື້ນແທນທີ່ຈະ ເຮັດໃໝ່ແທນ, ຫຼື ທາສີບາງບ່ອນຂອງຝາເຮືອນ ແທນທີ່ຈະທາສີໃໝ່ທົ່ວໝົດ. ພວກຫ້ອງນ້ຳ ແລະ ຫ້ອງຄົວ ກິນກໍອາດຈະຖືກສ້ອມແປງເປັນບາງສ່ວນ ແທນທີ່ຈະເຮັດໃໝ່ທັງໝົດ. ຖ້າຫາກວ່າຫາ ວັດຖຸ ທີ່ຄືກັນບໍ່ໄດ້ ບ່ອນທີ່ຖືກຕາມກໍອາດຈະມີຄວາມ ແຕກຕ່າງກັນໃນເລື້ອງສີ, ແບບ ຫຼື ຮູບຮ່າງໃນ ເວລາເຮັດແລ້ວ.

## ໂຄງການສ້ອມແປງສິ່ງ ເປ່ເພຕາມອາຍຸການໃຊ້ງານ

ພວກເຮົາມີໂຄງການສ້ອມແປງສິ່ງເປ່ເພຕາມອາຍ ການໃຊ້ງານ ທີ່ ປ່ຽນສິ່ງຕິດຕັ້ງແລະຕໍ່ເຕີມໃນເມື່ອມັນເກົ່າ ແລ້ວ. ຕົວຢ່າງການຕິດຕັ້ງແລະຕໍ່ເຕີມນີ້ຮວມເຖິງ ເຕົາໄຟ, ຖັງນ້ຳຮ້ອນ, ເຮືອນຄົວ, ຫ້ອງນ້ຳ ແລະ ຮາວຕາກເຄື່ອງ.

ແຕ່ລະປີ ເຮືອນທຸກໆຫຼັງຈະຖືກກວດເບິ່ງເພື່ອຈະ ກຳນົດ ຂັ້ນການສ້ອມແປງທີ່ຕ້ອງການ. ຕໍ່ມາກໍຈະ ວາງແປນການ ສ້ອມແປງ ແລະ ຈະປ່ຽນແປງໄປໃນແຕ່ລະປີ.

## ຈົ່ງບອກພວກເຮົາຖ້າຫາກວ່າມີບັນຫາ ອັນໃດໃນ ເຮືອນທ່ານ

ເພື່ອຈະແຈ້ງເລື້ອງບັນຫາ ຈົ່ງມາຫາພວກເຮົາທີ່ ຫ້ອງການ ທີ່ ຫ້ອງເບີ 38 ບອນນີຣິກ ພລາຊ່າ ຈາກ 9 ໂມງເຊົ້າ ຫາ 5 ໂມງແລງ ວັນຈັນ ຫາ ວັນສຸກ.

ຫຼື

ໂທຣະສັບຫາພະນັກງານທີ່ເປັນກັນເອງທີ່ Helpdesk ຈາກ 9 ໂມງເຊົ້າ ຫາ 5 ໂມງແລງ ວັນຈັນ ຫາ ວັນສຸກ ຕາມໝາຍ ເລກ 1300 137 265. ໝາຍເລກນີ້ກໍໃຊ້ຫຼັງຊົ່ວໂມງເຮັດການ ໄດ້ເຊັ່ນກັນ ສຳລັບການສ້ອມແປງທີ່ສຸກເສີນ.

ທ່ານຈະໄດ້ຮັບນຳເບີອ້າງອີງ ແລະ ກຳນົດເວລາສຳລັບ ວຽກການສ້ອມແປງທຸກຢ່າງທີ່ທ່ານຂໍໄປ.

ຖ້າທ່ານປາກພາສາອັງກິດບໍ່ໄດ້ ຈົ່ງໂທຣະສັບຫາ ພວກເຮົາ ຕາມໝາຍເລກ 1300-137265. ຈົ່ງ ບອກຊື່, ໝາຍເລກ ໂທຣະສັບຢູ່ເຮືອນແລະພາສາທີ່ທ່ານປາກ. ພວກເຮົາຈະ ໂທຣະສັບກັບມາຫາທ່ານຄືນພ້ອມດ້ວຍນາຍພາສາ.

ບັນດາຜູ້ອາໃສທີ່ພິການທາງຫູ ສາມາດຕິດຕໍ່ພວກເຮົາຕາມ ໝາຍເລກ TTY 1800 628 310.

**PO BOX 151 Bonnyrigg LPO NSW 2177**
ຫ້ອງການ **1300 137 265** ແຟັກຊ໌ **9616 9100**
**info@newleafcommunitiess.com.au**